# ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ
# ສາຂາ ນະຄອນຫຼວງວຽງຈັນ

## ບົດລາຍງານຖານະການເງິນ
## ແລະ
## ບົດລາຍງານຂອງຜູ້ກວດສອບບັນຊີພາຍນອກ
## ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ**
**ສາຂາ ນະຄອນຫຼວງວຽງຈັນ**

**ສາລະບານ** **ໜ້າ**


| | | |
|---|---|---|
| 1 | ຂໍ້ມູນທົ່ວໄປກ່ຽວກັບສາຂາ | 1 |
| 2 | ຄວາມຮັບຜິດຊອບຂອງຄະນະຜູ້ບໍລິຫານຕໍ່ບົດລາຍງານຖານະການເງິນ | 2 - 3 |
| 3 | ບົດລາຍງານຂອງຜູ້ກວດສອບບັນຊີພາຍນອກ | 4 - 5 |
| 4 | ໃບລາຍງານຖານະການເງິນ | 6 - 7 |
| 5 | ໃບລາຍງານຜົນໄດ້ຮັບ | 8 - 9 |
| 6 | ໃບລາຍງານສ່ວນປ່ຽນແປງທຶນ | 10 |
| 7 | ໃບລາຍງານກະແສເງິນສົດ | 11 - 12 |
| 8 | ໝາຍເຫດປະກອບສຳລັບບົດລາຍງານຖານະການເງິນ | 13 - 38 |

## ຂໍ້ມູນທົ່ວໄປກ່ຽວກັບສາຂາ

| | | |
|---|---|---|
| ສາຂາ | ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ<br>ຈໍາກັດ ສາຂາ ນະຄອນຫຼວງວຽງຈັນ | |
| **ໃບອະນຸຍາດດໍາເນີນກິດຈະການທະນາຄານເລກທີ** | 06/ທຫລ, ລົງວັນທີ 11 ກຸມພາ 2013.<br>ໃບທະບຽນວິສາຫະກິດເລກທີ 1497<br>ລົງວັນທີ 25 ທັນວາ 2012 | |
| **ຄະນະຜູ້ບໍລິຫານ:** | ທ່ານ ລູ ຈ້ຽນ | ຜູ້ອໍານວຍການ |
| | ທ່ານ ເສິນ ອິງຈີ້ | ຮອງຜູ້ອໍານວຍການ |
| | ທ່ານ ຈໍຊິ່ງ ບິວສີເນັ່ງມາ | ຮອງຜູ້ອໍານວຍການ |
| **ສໍານັກງານ** | ໜ່ວຍ 12, ຖະໜົນ ອາຊຽນ<br>ບ້ານ ສີບຸນເຮືອງ<br>ເມືອງ ຈັນທະບູລີ<br>ນະຄອນຫຼວງວຽງຈັນ, ສປປ ລາວ | |
| **ຜູ້ກວດສອບບັນຊີ** | ບໍລິສັດ ເຄພີເອັມຈີ ລາວ ຈໍາກັດ<br>ຊັ້ນ 4, ຕຶກ ເຄພີ ທາວເວີ<br>ຖະໜົນ 23 ສິງຫາ<br>ຕູ້ ປ.ນ 6978<br>ນະຄອນຫຼວງວຽງຈັນ, ສປປ ລາວ | |

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານການເງິນ**

ຄະນະຜູ້ບໍລິຫານຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຮັບຜິດຊອບຕໍ່ການກະກຽມ ບົດລາຍງານຖານະການເງິນທັງໝົດຂອງແຕ່ລະປີຢ່າງຖືກຕ້ອງຕາມຄວາມເປັນຈິງຂອງບົດລາຍງານຖານະການເງິນ ໃນການດຳເນີນງານຂອງສາຂາ ໃນສິ້ນປີ 31 ທັນວາ 2015 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສຳຮອງອື່ນໆ ໃບລາຍງານກະແສເງິນສົດ ທີ່ສອດຄ່ອງກັບລະບຽບການບັນຊີ ແລະ ຫຼັກການບັນຊີທົ່ວໄປທີ່ໄດ້ຮັບການ ຍອມຮັບ ໃນ ສ ປ ປ ລາວ. ໃນການກະກຽມບົດລາຍງານຖານະການເງິນເຫຼົ່ານີ້, ຜູ້ບໍລິຫານຂອງທະນາຄານ ຕ້ອງໄດ້ປະຕິບັດດັ່ງນີ້:

i) ນຳໃຊ້ນະໂຍບາຍການບັນຊີທີ່ເຫມາະສົມພ້ອມເອກກະສານປະກອບຢ່າງສົມເຫດສົມຜົນ,ພ້ອມການຕັດສິນຄາດຄະເນຢ່າງຮອບຄອບ ແລະ ພ້ອມນຳມາປະຕິບັດຢ່າງຕໍ່ເນື່ອງ ;

ii) ສອດຄອງກັບການປະຕິບັດຕາມຫຼັກການບັນຊີໂດຍທົ່ວໄປແລະໄດ້ຮັບການຍອມຮັບໃນ ສ ປ ປ ລາວ ("ຫຼັກການບັນຊີລາວ") ແລະ ທີ່ອອກໃຫ້ ແລະ ແນະນຳ ໂດຍ ທະນາຄານແຫ່ງ ສ ປ ປ ລາວ, ໃນກໍລະນີຫາກມີຄວາມແຕກຕ່າງທາງດອກເບ້ຍ,ໃນການນຳສະເໜີຕາມຄວາມເປັນຈິງທາງສາຂາຈະຕ້ອງເປີດເຜີຍຂໍ້ມູນ,ພ້ອມອະທິບາຍໃຫ້ເຫດຜົນຕົວຈິງທີ່ສົມເຫດສົມຜົນໃນບົດລາຍງານການເງິນ;

iii) ເກັບຮັກສາເອກະສານການບັນທຶກບັນຊີຢ່າງຄົບຖ້ວນ ແລະ ມີລະບົບການຄຸ້ມຄອງພາຍໃນອົງກອນຢ່າງມີປະສິດທິພາບ

iv) ປະຕິບັດຂັ້ນຕອນທີ່ສົມເຫດສົມຜົນເພື່ອຄວາມປອດໄພຊັບສິນຂອງສາຂາ ແລະ ເພື່ອຫຼີກລ້ຽງ ແລະ ປ້ອງກັນການສໍ້ໂກງ, ຂໍ້ຜິດພາດ ແລະ ອື່ນໆ

v) ກະກຽມບົດລາຍງານການເງິນບົນພື້ນຖານການດຳເນີນງານທີ່ຕໍ່ເນື່ອງ ຍົກເວັ້ນໃນກໍລະນີທີ່ທາງສາຂາຈະຄາດການວ່າທາງທະນາຄານຈະດຳເນີນງານຕໍ່ໄປໃນອະນາຄົດ; ແລະ

vi) ຄຸ້ມຄອງ ແລະ ຊີ້ນຳສາຂາຢ່າງມີປະສິດທິພາບ, ມີສ່ວນຮ່ວມໃນການຕັດສິນໃຈຕໍ່ບັນຫາສຳຄັນທີ່ອາດມີຜົນກະທົບຕໍ່ການດຳເນີນງານຂອງສາຂາ ແລະ ຜົນດຳເນີນງານ ແລະ ທະນາຄານຄວນສະແດງໃຫ້ເຫັນວ່າ ຜົນຂອງການຕັດສິນໃຈດັ່ງກ່າວນັ້ນແມ່ນສາມາດເຫັນຜົນໄດ້ໃນບົດລາຍງານການເງິນ ຂອງສາຂາ.

ຄະນະບໍລິຫານຂໍຢັ້ງຢືນວ່າທາງຄະນະບໍລິຫານໄດ້ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງຢ່າງຄົບຖ້ວນໃນການກະກຽມບົດລາຍງານຖານະການເງິນ.

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ

ICBC 中国工商银行 万象分行

ການອະນຸມັດບົດລາຍງານການເງິນ

ພວກຂ້າພະເຈົ້າ, ທ່ານ ລູ ຈຽ້ນ ໂດຍຕາງໜ້າ ຄະນະຜູ້ບໍລິຫານ ຂໍກ່າວວ່າບົດລາຍງານຖານະການເງິນຈາກໜ້າ 6 ຫາ 38 ແມ່ນຖືກຕ້ອງຕາມຄວາມເປັນຈິງຂອງຖານະການເງິນ ການດຳເນີນງານຂອງທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ ໃນສິ້ນປີ ວັນທີ 31 ທັນວາ 2015 ແລະ ຜົນໄດ້ຮັບຂອງການດຳເນີນງານ ແລະ ກະແສເງິນສົດຂອງທາງສາຂາແມ່ນຖືກຕ້ອງຕາມຫຼັກການບັນຊີທົ່ວໄປທີ່ໄດ້ຮັບການຍອມຮັບແຫ່ງ ສ ປ ປ ລາວ.

ເຊັນຕາງໜ້າຄະນະບໍລິຫານ




ທ່ານ ລູ ຈຽ້ນ
ຜູ້ອຳນວຍການ
31 ມີນາ 2016


Industrial and Commercial Bank of China LTD. VIENTIANE BRANCH P.O.BOX：7302,Vientiane Capital,Lao PDR.
Tel：00856-21-258888 Ext：8019 Fax：00856-21-258889 Website: www.icbc.com.la Email: icbcvte@la.icbc.com.cn

**ບົດລາຍງານຂອງຜູ້ກວດສອບບັນຊີພາຍນອກ**

**ເຖິງ ຄະນະຜູ້ບໍລິຫານຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບົດລາຍງານຖານະການເງິນຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ (''ສາຂາ'') ໃນວັນທີ 31 ທັນວາ 2015, ເຊິ່ງກ່ຽວຂ້ອງກັບໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນ ແລະໃບລາຍງານກະແສເງິນສົດສຳລັບປີການສິ້ນສຸດບັນຊີ, ເຊິ່ງປະກອບດ້ວຍບົດສະຫລຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ໝາຍເຫດອະທິບາຍແບບເພີ່ມເຕີມອື່ນໆ. ສາຂາແມ່ນພາກສ່ວນຫນຶ່ງຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ແລະບໍ່ແມ່ນພາກສ່ວນທີ່ແຍກດຳເນີນງານຕ່າງຫາກ. ບົດລາຍງານຖານະການເງິນແມ່ນໄດ້ຖືກກະກຽມຈາກບົດບັນທຶກຂອງສາຂາ ແລະ ສະແດງໃຫ້ເຫັນພຽງແຕ່ທຸລະກຳທີ່ເກີດຂຶ້ນພາຍໃນເທົ່ານັ້ນ.

ບົດລາຍງານຖານະການເງິນແມ່ນໄດ້ກະກຽມໂດຍສາຂາເຊິ່ງນຳໃຊ້ພື້ນຖານການກະກຽມບົດລາຍງານຖານະການເງິນ ແລະ ນະໂຍບາຍການບັນຊີທີ່ອະທິບາຍໃນໝາຍເຫດ 2 ແລະ 3 ຂອງບົດລາຍງານຖານະການເງິນ.

***ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ບົດລາຍງານຖານະການເງິນ***

ຜູ້ບໍລິຫານທະນາຄານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີບົດລາຍງານຖານະການເງິນທີ່ຖືກຕ້ອງ ຕາມມາດຕະຖານການລາຍງານການບັນຊີ ແລະ ການເງິນທີ່ຖືກຍອມຮັບໃນ ສປປ ລາວ, ແລະສຳລັບການຄວບຄຸມພາຍໃນ ເຊັ່ນ ການກຳນົດການຈັດການແມ່ນມີຄວາມຈຳເປັນເພື່ອໃຫ້ແນ່ໃຈ ວ່າການກະກຽມບົດລາຍງານຖານະການເງິນແມ່ນບໍ່ມີ ຂໍ້ຜິດພາດທີ່ເກີດຈາກການບິດເບືອນ, ສໍ້ໂກງ ຫລື ຂໍ້ຜິດພາດອື່ນໆ.

***ຄວາມຮັບຜິດຊອບຂອງຜູ້ກວດສອບ***

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນການສະແດງຄຳຄິດເຫັນຕໍ່ບົດລາຍງານຖານະການເງິນດັ່ງກ່າວໂດຍອີງຕາມການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບຕາມມາດຕະຖານການກວດສອບສາກົນ. ບັນດາມາດຕະຖານດັ່ງກ່າວຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຄວາມຮຽກຮ້ອງຈັນຍາບັນ, ວາງແຜນ ແລະ ປະຕິບັດການກວດສອບເພື່ອໃຫ້ໄດ້ຄວາມເຊື່ອໝັ້ນຢ່າງສົມເຫດສົມ ຜົນວ່າບົດລາຍງານການເງິນນີ້ແມ່ນປາສະຈາກຂໍ້ຜິດພາດ.

ການກວດສອບລວມມີຫຼາຍຂັ້ນຕອນໃນການປະຕິບັດເພື່ອເກັບກຳເອົາຫຼັກຖານການກວດສອບ ກ່ຽວກັບຈຳນວນ ແລະ ການເປີດເຜີຍຢູ່ໃນບົດລາຍງານການເງິນ. ຂັ້ນຕອນໃນການຄັດເລືອກແມ່ນຂຶ້ນກັບການພິຈາລະນາຂອງຜູ້ກວດສອບ, ເຊິ່ງປະກອບດ້ວຍການປະເມີນຄວາມສ່ຽງຂອງຂໍ້ຜິດພາດທີ່ສຳຄັນຂອງບົດລາຍງານຖານະການເງິນວ່າເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນພວກຂ້າພະເຈົ້າໄດ້ພິຈາລະນາກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວພັນກັບການກະກຽມ ແລະ ການນຳສະເໜີບົດລາຍງານການເງິນຂອງໜ່ວຍງານຢ່າງຖືກຕ້ອງ, ເພື່ອອອກແບບຂັ້ນຕອນການກວດສອບໃຫ້ເໝາະສົມກັບຕາຕະລາງ. ແຕ່ວ່າພວກຂ້າພະເຈົ້າບໍ່ໄດ້ມີຈຸດປະສົງໃນການສະແດງຄວາມຄິດເຫັນກ່ຽວກັບການຄວບຄຸມພາຍໃນຂອງໜ່ວຍງານໃຫ້ມີປະສິດທິພາບ. ການກວດສອບແມ່ນລວມທັງການປະເມີນຜົນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍທາງການບັນຊີ ແລະ ການປະເມີນທາງການບັນຊີຢ່າງສົມເຫດ

ສົມຜົນໂດຍຄະນະຜູ້ບໍລິຫານ, ກໍ່ຄືການສະແດງການປະເມີນຜົນໂດຍລວມຂອງການກະກຽມບົດລາຍງານຖານະການເງິນ.

ພວກຂ້າພະເຈົ້າເຊື່ອໝັ້ນວ່າຫຼັກຖານໃນການກວດສອບທີ່ພວກຂ້າພະເຈົ້າໃຊ້ແມ່ນພຽງພໍ ແລະ ເໝາະສົມທີ່ຈະເປັນພື້ນຖານໃນການສະແດງຄວາມຄິດເຫັນຂອງພວກຂ້າພະເຈົ້າ.

***ຄວາມຄິດເຫັນຂອງຜູ້ກວດສອບ***

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ບົດລາຍງານຖານະການເງິນຂອງ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ວັນທີ 31 ທັນວາ 2015, ພ້ອມກັນນີ້ຜົນການດຳເນີນງານທາງການເງິນ ແລະ ການເຄື່ອນໄຫວຂອງກະແສເງິນສົດທ້າຍປີ ແມ່ນສອດຄ່ອງຕາມຫຼັກການບັນຊີຂອງທະນາຄານ ແຫ່ງ ສ ປ ປ ລາວ ແລະ ສອດຄອ່ງກັບຫຼັກການບັນຊີທີ່ຍອມຮັບທົ່ວໄປໃນ ສປປ ລາວ.

***ການເນັ້ນໜັກຄວາມເຫັນ***

ໂດຍບໍ່ສະແດງຄວາມເຫັນແບບມີເງື່ອນໄຂເພີ່ມເຕີມ, ພວກຂ້າພະເຈົ້າຂໍເນັ້ນໜັກໃນໝາຍເຫດທີ 2 (ກ) (i) ຂອງບົດລາຍງານສະບັບນີ້, ເຊິ່ງໄດ້ລະບຸວ່າບົດລາຍງານຖານະການເງິນສະບັບນີ້ແມ່ນບໍ່ມີເຈດຕະນາທີ່ຈະ ນຳສະເໜີຖານະການເງິນ ແລະ ຜົນຂອງການດຳເນີນງານ ແລະ ລາຍງານກະແສເງິນສົດຕາມຫຼັກການ ບັນຊີທີ່ຖືກຍອມຮັບໂດຍທົ່ວໄປໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອ ຈາກ ສປປ ລາວ. ດັ່ງນັ້ນ, ບົດລາຍງານຖານະການເງິນສະບັບນີ້ບໍ່ໄດ້ຖືກອອກແບບສຳລັບຜູ້ທີ່ບໍ່ຮູ້ກ່ຽວກັບກົດໝາຍ ແລະ ຂໍ້ກຳນົດຂອງ ລາວ.

**ບໍລິສັດ ເຄພີເອັມຈີ ລາວ ຈຳກັດ**

ນະຄອນຫຼວງວຽງຈັນ, ສ ປ ປ ລາວ

ວັນທີ 31 ມີນາ 2016

**ທະນາຄານ ອຸດສາຫະກໍາ ແລະ ການຄ້າຈີນ ຈໍາກັດ ສາຂາ ນະຄອນຫຼວງວຽງຈັນ**
**ໃບລາຍງານຖານະການເງິນ**
**ສໍາລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ໝາຍເຫດ | 2015<br>ກີບ | 2014<br>ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ | 4 | 80,800,499,872 | 42,316,021,926 |
| ທຸລະກໍາຫວ່າງທະນາຄານແລະຕະຫຼາດເງິນ | | | |
| ໜີ້ຕ້ອງຮັບຈາກສໍານັກງານໃຫຍ່ ແລະ ສາຂາອື່ນ | 25(ກ) | 3,081,427,165,032 | 823,021,729,795 |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | 5 | 3,262,954,206,976 | 185,196,006,495 |
| ເງິນຝາກຕາມລະບຽບການກັບທະນາຄານກາງ | 6 | 310,915,885,074 | 152,782,618,180 |
| ເງິນລົງທຶນ | 7 | 2,412,016,306,477 | 2,036,216,757,985 |
| ເງິນກູ້ ແລະ ເງິນລ່ວງໜ້າ | 8 | 5,622,568,363,850 | 9,411,379,941,679 |
| ຕາສານສືບເນື່ອງຜະລິດຕະພັນການເງິນ | 9 | 17,672,568,098 | 544,632,534 |
| ຊັບສິນ ແລະ ອຸປະກອນ | 10 | 165,205,722,821 | 98,963,619,791 |
| ຊັບສິນທີ່ບໍ່ມີຕົວຕົນ | 11 | 50,225,402,140 | 50,833,151,564 |
| ຊັບສິນອື່ນໆ | 12 | 41,677,883,948 | 24,157,077,445 |
| ***ລວມຍອດຊັບສິນ*** | | **15,045,464,004,288** | **12,825,411,557,394** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ ສໍາຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຫົວໜ້າບັນຊີ ຜູ້ອໍານວຍການ

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**
**ໃບລາຍງານຖານະການເງິນ (ຕໍ່)**
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ໝາຍເຫດ | 2015<br>ກີບ | 2014<br>ກີບ |
|---|---|---|---|
| ***ໜີ້ສິນ ແລະ ທຶນ*** | | | |
| ***ໜີ້ສິນ*** | | | |
| ເງິນຝາກຈາກລູກຄ້າ | 13 | 3,288,644,723,383 | 2,067,816,247,512 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | | |
| ໜີ້ຕ້ອງສົ່ງໃຫ້ສາຂາອື່ນ | 25(ກ) | 11,151,057,913,792 | 9,815,131,427,721 |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | 14 | 171,646,237,322 | 25,710,930,457 |
| ເງິນກູ້ຢືມຈາກສະຖາບັນການເງິນອື່ນ ນອກເໜືອຈາກສຳນັກງານໃຫ່ຍ ແລະ ສາຂາອື່ນ | 15,24 | | 484,020,000,000 |
| ອາກອນຕ້ອງຈ່າຍ | 16 | 12,647,334,765 | 4,934,455,521 |
| ຕາສານສືບເນື່ອງໜີ້ສິນທາງການເງິນ | 17 | 224,978,041 | |
| ໜີ້ສິນອື່ນໆ | 18 | 58,473,781,586 | 62,148,845,716 |
| ***ລວມຍອດໜີ້ສິນ*** | | **14,682,694,968,889** | **12,459,761,906,927** |
| ***ທຶນ*** | | | |
| ທຶນປະກອບສວນຈົດທະບຽນຖອກແລ້ວ | 19 | 239,970,000,000 | 239,970,000,000 |
| ຄັງແຮສຳຮອງຕາມລະບຽບການ | 20 | 22,826,058,656 | 12,568,659,697 |
| ກຳໄລສະສົມ | | 99,972,976,743 | 113,110,990,770 |
| **ລວມຍອດທຶນ** | | **362,769,035,399** | **365,649,650,467** |
| ***ລວມຍອດໜີ້ສິນ ແລະ ທຶນ*** | | **15,045,464,004,288** | **12,825,411,557,394** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຫົວໜ້າບັນຊີ ຜູ້ອຳນວຍການ

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**
**ໃບລາຍງານຜົນໄດ້ຮັບ**
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ໝາຍເຫດ | 2015<br>ກີບ | 2014<br>ກີບ |
|---|---|---|---|
| **ລາຍຮັບຈາກດອກເບ້ຍ** | | | |
| ດອກເບ້ຍເງິນກູ້ ແລະ ເງິນລ່ວງໜ້າ | | 122,880,755,266 | 127,696,228,293 |
| ດອກເບ້ຍຈາກທຸລະກຳລະຫວ່າງ ທະນາຄານ ແລະ ຕະຫຼາດເງິນ | | 25,141,960,191 | 4,669,540,795 |
| ດອກເບ້ຍຈາກການລົງທຶນຊື້ພັນທະບັດ | | 105,959,001,175 | 94,328,547,803 |
| **ລວມລາຍຮັບດອກເບ້ຍ** | | **253,981,716,632** | **226,694,316,891** |
| **ລາຍຈ່າຍດອກເບ້ຍ** | | | |
| ດອກເບ້ຍເງິນຝາກ | | (18,961,830,169) | (3,080,495,004) |
| ດອກເບ້ຍຈາກທຸລະກຳລະຫວ່າງ ທະນາຄານ ແລະ ຕະຫຼາດເງິນ | | (145,745,072,260) | (69,473,752,857) |
| ດອກເບ້ຍເງິນກູ້ຢືມຈາກສະຖາບັນ ການເງິນອື່ນນອກເໜືອຈາກສຳນັກງານ ໃຫຍ່ ແລະ ສາຂາອື່ນ | | (2,767,326,907) | (42,279,245,862) |
| **ລວມລາຍຈ່າຍດອກເບ້ຍ** | 21 | **(167,474,229,336)** | **(114,833,493,723)** |
| **ລາຍຮັບສຸດທິດອກເບ້ຍ** | | **86,507,487,296** | **111,860,823,168** |
| ເງິນແຮສຳລັບໜີ້ສູນ,ໜີ້ສົງໄສ ແລະ ເງິນລ່ວງໜ້າ | 8 | (4,146,884,560) | 29,248,241,659 |
| **ລາຍຮັບສຸດທິຈາກດອກເບ້ຍ ຫຼັງຈາກໜີ້ສົງໄສ ແລະ ໜີ້ສູນ** | | **82,360,602,736** | **141,109,064,827** |
| **ລາຍຮັບອື່ນໆ** | | | |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ | | 6,147,732,971 | 5,214,766,143 |
| ກຳໄລຈາກອັດຕາແລກປ່ຽນ | | 74,056,302,276 | 2,861,033,003 |
| ລາຍຮັບອື່ນໆ | | 801,931,216 | 6,362,224 |
| **ລວມລາຍຮັບອື່ນໆ** | 22 | 81,005,966,463 | 8,082,161,370 |
| **ລາຍຮັບກ່ອນຫັກລາຍຈ່າຍທີ່ບໍ່ແມ່ນ ດອກເບ້ຍ ແລະ ອາກອນກຳໄລ** | | **163,366,569,199** | **149,191,226,197** |

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**
**ໃບລາຍງານຜົນໄດ້ຮັບ (ຕໍ່)**
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ໝາຍເຫດ | 2015<br>ກີບ | 2014<br>ກີບ |
|---|---|---|---|
| **ລາຍຈ່າຍດຳເນີນທຸລະກິດ** | | | |
| ລາຍຈ່າຍບຸກຄະລາກອນ | | (18,430,390,497) | (23,055,810,388) |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ | | (10,571,575,159) | (2,842,801,295) |
| ລາຍຈ່າຍອື່ນໆ | | (11,833,426,252) | (12,466,729,589) |
| | | **(40,835,391,908)** | **(38,365,341,272)** |
| **ກຳໄລກ່ອນເສຍອາກອນກຳໄລ** | | 122,531,177,291 | 110,825,884,925 |
| ອາກອນກຳໄລຕ້ອງຈ່າຍ | 23 | (19,937,014,101) | (26,860,076,810) |
| **ກຳໄລໃນປີ** | | **102,594,163,190** | **83,965,808,115** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຫົວໜ້າບັນຊີ ຜູ້ອຳນວຍການ

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**
**ໃບລາຍງານສ່ວນປ່ຽນແປງທຶນ**
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ທຶນປະກອບສວນຈິດທະບຽນຈາກ ກີບ | ຄັງແຮສຳຮອງຕາມລະບຽບ ກີບ | ກຳໄລສະສົມ ກີບ | ລວມ ກີບ |
|---|---|---|---|---|
| **ຍອດເຫຼືອບັນຊີ ໃນວັນທີ 1 ມັງກອນ 2014** | **239,970,000,000** | **4,173,694,285** | **37,540,148,067** | **281,683,842,352** |
| ກຳໄລໃນປີ | - | - | 83,965,808,115 | 83,965,808,115 |
| ຫັກເຂົ້າຄັງແຮສຳຮອງພາຍໃນປີ | - | 8,394,965,412 | (8,394,965,412) | - |
| **ຍອດເຫຼືອບັນຊີໃນວັນທີ 31 ທັນວາ 2014 ແລະວັນທີ 1 ມັງກອນ 2015** | **239,970,000,000** | **12,568,659,697** | **113,110,990,770** | **365,649,650,467** |
| ກຳໄລໃນປີ | - | - | 102,594,163,190 | 102,594,163,190 |
| ຫັກເຂົ້າຄັງແຮສຳຮອງພາຍໃນປີ | - | 10,257,398,959 | (10,257,398,959) | - |
| ການຈັດສັນຜົນກຳໄລ | - | - | (105,474,778,258) | (105,474,778,258) |
| **ຍອດເຫຼືອບັນຊີໃນວັນທີ 31 ທັນວາ 2015** | **239,970,000,000** | **22,826,058,656** | **99,972,976,743** | **362,769,035,399** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຫົວໜ້າບັນຊີ ຜູ້ອຳນວຍການ

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**

**ໃບລາຍງານກະແສເງິນສົດ**

**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ໝາຍເຫດ | 2015<br>ກີບ | 2014<br>ກີບ |
|---|---|---|---|
| **ກະແສເງິນສົດຈາກການດຳເນີນທຸລະກິດ** | | | |
| ກຳໄລຫຼັງຫັກອາກອນ | | **102,594,163,190** | **83,965,808,115** |
| *ການດັດແກ້ສຳລັບ:* | | | |
| ຄັງແຮກັນໜີ້ເສຍ | | 4,146,884,560 | (29,248,241,659) |
| ຄ່າເສື່ອມສະສົມ ແລະ ຄ່າຫຼຸ້ຍຫ້ຽນຊັບສິນ | | 10,571,575,159 | 2,842,801,295 |
| ລາຍຮັບຈາກການລົງທຶນໃນພັນທະບັດ | | (105,959,001,175) | (94,328,547,803) |
| ລາຍຈ່າຍດອກເບ້ຍການກູ້ຢືມຈາກສະຖາບັນ ການເງິນອື່ນນອກຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | | 2,767,326,907 | |
| ລາຍຈ່າຍອາກອນກຳໄລ | | 19,937,014,101 | 26,860,076,810 |
| | | **34,057,962,742** | **(9,908,103,242)** |
| ການປ່ຽນແປງຊັບສິນ / ໜີ້ສິນ ໃນການ ດຳເນີນງານ | | | |
| ການປ່ຽນແປງຂອງເງິນຝາກ ຕາມລະບຽບການ | | (158,133,266,894) | (13,662,768,764) |
| ການປ່ຽນແປງຂອງເງິນກູ້ ແລະ ເງິນລ່ວງໜ້າໃຫ້ ລູກຄ້າ | | 3,784,660,232,427 | (3,184,363,314,667) |
| ການປ່ຽນຂອງຕາສານສືບເນື່ອງຊັບສິນດ້ານ ການເງິນ | | (17,127,935,564) | 356,252,724 |
| ການປ່ຽນຂອງຊັບສິນອື່ນໆ | | (17,520,806,503) | (5,977,287,639) |
| ການປ່ຽນແປງຂອງເງິນຝາກລູກຄ້າ | | 1,220,828,475,871 | 1,077,338,191,983 |
| ການປ່ຽນແປງຂອງເງິນຝາກ ຈາກທະນາຄານອື່ນ | | 1,481,861,792,936 | 8,035,883,366,358 |
| ການປ່ຽນແປງຂອງອາກອນທັກນະທີ່ຈ່າຍ | | 873,868,464 | (434,999,112) |
| ການປ່ຽນແປງຂອງໜີ້ສິນອື່ນໆ | | 4,240,767,622 | 41,421,170,019 |
| ການປ່ຽນຂອງຕາສານສືບເນື່ອງໜີ້ສິນ ທາງການເງິນ | | (224,978,041) | - |
| ລາຍຈ່າຍອາກອນກຳໄລ | | (13,098,003,321) | (22,147,566,628) |
| **ເງິນສົດສຸດທິທີ່ໃຊ້ເຂົ້າໃນການດຳເນີນທຸລະກິດ** | | **6,320,418,109,739** | **5,918,504,941,032** |

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**

**ໃບລາຍງານກະແສເງິນສົດ (ຕໍ່)**

**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

| | ໝາຍເຫດ | 2015<br>ກີບ | 2014<br>ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ຊື້ຊັບສິນ ແລະ ອຸປະກອນ | | (76,197,317,085) | (87,287,809,251) |
| ຊື້ ຊັບສິນບໍ່ມີຕົວຕົນ | | (8,611,680) | - |
| ລົງທຶນໃນການຊື້ພັນທະບັດ | | (617,740,000,000) | (601,458,032,047) |
| ເງິນສົດຮັບຈາກການຂາຍ ແລະ ການຖອນພັນທະບັດລົງທຶນ | | 243,658,096,013 | 161,375,115,356 |
| ລາຍຮັບຈາກການລົງທຶນທາງພັນ ທະບັດ | | 104,241,356,670 | 94,821,334,107 |
| **ເງິນສົດສຸດທິທີ່ໃຊ້ໃນກິດຈະການລົງທຶນ** | | **(346,046,476,082)** | **(432,549,391,835)** |
| **ກະແສເງິນສົດຈາກທຸລະກຳການເງິນ** | | | |
| ເງິນສົດທີ່ໄດ້ຮັບຈາກເງິນກູ້ | | - | 15,012,858,340,000 |
| ເງິນທີ່ຈ່າຍໃຫ້ເງິນກູ້ | | (484,020,000,000) | (19,883,514,340,000 ) |
| ລາຍຈ່າຍດອກເບ້ຍ | | (10,228,741,735) | |
| ການຈັດສັນກຳໄລ | | (105,474,778,258) | |
| **ເງິນສົດສຸດທິໄດ້ຈາກກິດຈະກຳທາງ ການເງິນ** | | **(599,723,519,993)** | **(4,870,656,000,000)** |
| **ປ່ຽນແປງສຸດທິ ເງິນສົດ ແລະ ທຽບເທົ່າເງິນສົດ** | | **5,374,648,113,664** | **615,299,549,197** |
| ເງິນສົດ ແລະ ທຽບເທົ່າເງິນສົດວັນທີ 1 ມັງກອນ | | 1,050,533,758,216 | 435,234,209,019 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນວັນທີ 31 ທັນວາ** | 24 | **6,425,181,871,880** | **1,050,533,758,216** |

ພາກໝາຍເຫດໃບລາຍງານນີ້ແມ່ນສ່ວນທີ່ສຳຄັນຂອງບົດລາຍງານຖານະການເງິນ.

ກະກຽມໂດຍ: ອະນຸມັດໂດຍ:

ຫົວໜ້າບັນຊີ ຜູ້ອຳນວຍການ

**ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ**
**ໜາຍເຫດປະກອບສຳລັບບົດລາຍງານການເງິນ**
**ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2015**

**1. ຂໍ້ມູນທົ່ວໄປ ແລະ ກິດຈະກຳຫຼັກ**

ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ (“ສາຂາ”) ເປັນສາຂາ ຂອງທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ, ທີ່ພວມດຳເນີນທຸລະກິດຢູ່ໃນປະເທດ ສປ ຈີນ ເຊິ່ງມີສາຂາຕັ້ງຢູ່ ໜ່ວຍ 12, ຖະໜົນ ອາຊຽນ, ບ້ານ ສີບຸນເຮືອງ, ເມືອງ ຈັນທະບູລີ , ນະຄອນຫຼວງ ວຽງຈັນ ທີ່ດຳເນີນທຸລະກິດຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ(“ສ ປ ປ ລາວ”). ສາຂາໄດ້ເລີ່ມດຳເນີນທຸລະກິດໃນວັນທີ 28 ພະຈິກ 2011 ອີງຕາມໃບອະນຸຍາດລົງທຶນເລກທີ 180-11/ຜທ/ລທ3, ລົງວັນທີ 2 ສິງຫາ 2011. ເຊິ່ງໄດ້ຮັບການອະນຸຍາດ ຈາກທະນາຄານ ແຫ່ງ ສປປ ລາວ (“ທຫລ”), ໃຫ້ດຳເນີນທຸລະກິດທະນາຄານເລກທີ 16/ທຫລ, ລົງວັນທີ 25 ສິງຫາ 2011 ແລະ ໄດ້ມີການປ່ຽນແປງໃບອະນຸຍາດດຳເນີນກິດຈະການທະນາຄານ ໃນເດືອນ ກຸມພາ 2013.

ການບໍລິການຫຼັກຂອງສາຂາ ແມ່ນເພື່ອໃຫ້ບໍລິການທາງດ້ານການເງິນ, ການຄ້າ ແລະ ໃຫ້ບໍລິການດ້ານທະນາຄານແກ່ນັກລົງທຶນ ລາວ, ຈີນ ແລະ ໄທ, ແລະ ໃຫ້ບໍລິການດ້ານທະນາຄານແກ່ບຸກຄົນທົ່ວໄປ.

ວັນທີ 31 ທັນວາ 2015, ສາຂາມີພະນັກງານທັງໝົດ 80 ຄົນ (2014: 56ຄົນ)

**2. ພື້ນຖານຂອງການກະກຽມບົດລາຍງານການເງິນ**

**(ກ) ພື້ນຖານການບັນຊີທົ່ວໄປ**

***(i) ພື້ນຖານໃນການກະກຽມ***

ບົດລາຍງານຖານະການເງິນໄດ້ສະແດງກະກຽມເປັນຫົວໜ່ວຍລາວກີບ (“ກີບ”) ເຊິ່ງເປັນສະກຸນເງິນຫຼັກຂອງສາຂາ. ບົດລາຍງານຖານະການເງິນໄດ້ຖືກກະກຽມໂດຍອີງຕາມລະບຽບຫຼັກການບັນຊີຂອງສະຖາບັນການເງິນໃນ ສປປ ລາວ, ເຊິ່ງອາດຈະແຕກຕ່າງຈາກການລາຍງານຕາມມາດຕະຖານການລາຍງານການເງິນແບບສາກົນ, ແລະ ລະບຽບຫລັກການບັນຊີທີ່ມີການຍອມຮັບ ແລະ ປະຕິບັດໃນປະເທດອື່ນໆ. ດັ່ງນັ້ນ,ບົດລາຍງານຖານະການເງິນນີ້ບໍ່ມີຈຸດປະສົງທີ່ຈະສະແດງຖານະການເງິນ, ຜົນຂອງການດຳເນີນງານ, ການປ່ຽນແປງຂອງທຶນ, ກະແສເງິນສົດ ແລະ ໝາຍເຫດໃນທ້າຍປົດຕາມຫຼັກການບັນຊີທີ່ຖືກຍອມຮັບຕາມນະໂຍບາຍບັນຊີ ແລະ ການປະຕິບັດໂດຍທົ່ວໄປໃນບັນດາປະເທດ ແລະ ຂົງເຂດອື່ນໆທີ່ນອກເໜືອຈາກ ສ ປ ປ ລາວ. ນອກຈາກນີ້, ບົດລາຍງານການເງິນສະບັບນີ້ບໍ່ໄດ້ຖືກສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບນະໂຍບາຍບັນຊີ, ການດຳເນີນງານ ແລະ ການປະຕິບັດກົດ ໝາຍ ແລະ ຂໍ້ກຳນົດຂອງ ສ ປ ປ ລາວ.

**2. ພື້ນຖານຂອງການກະກຽມບົດລາຍງານຖານະການເງິນ (ຕໍ່)**

**(ກ) ພື້ນຖານການບັນຊີທົ່ວໄປ (ຕໍ່)**

ບົດລາຍງານຖານະການເງິນຂອງສາຂານີ້ແມ່ນໄດ້ຖືກອະນຸຍາດໃຫ້ສ້າງຂຶ້ນໂດຍຄະນະຜູ້ບໍລິຫານໃນວັນທີ 31 ທັນວາ 2016

***(ii) ພື້ນຖານການປະເມີນ***

ບົດລາຍງານຖານະການເງິນ ແມ່ນໄດ້ກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມ ດັ່ງທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີດັ່ງກ່າວແມ່ນໄດ້ຖືກນຳໃຊ້ຢ່າງສອດຄ່ອງກັບສາຂາ ແລະ ສອດຄ່ອງກັບຫຼັກການທີ່ໄດ້ນຳໃຊ້ໃນປີຜ່ານມາ.

***(iii) ການປະເມີນ ແລະ ການພິຈາລະນາທາງບັນຊີ***

ໃນການກະກຽມບົດລາຍງານຖານະການເງິນຂອງສາຂາ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງມີການພິຈາລະນາ, ການຄາດຄະເນ ແລະ ສົມມຸດຕິຖານຕາມການຈັດການຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການນຳໃຊ້ນະໂຍບາຍການບັນຊີ ແລະ ການລາຍງານມູນຄ່າ ຂອງຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີ່ລາຍງານ.

ການຄາດຄະເນ ແລະ ການສົມມຸດຖານແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ. ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນອາດຈະມີຄວາມຈຳເປັນທີ່ຈະຕ້ອງມີການແກ້ໄຂທີ່ໃຫ້ເປັນທີ່ຍອມຮັບໃນໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະໃນ ໄລຍະທີ່ຈະໄດ້ຮັບຜົນກະທົບໃນອະນາຄົດ.

**(ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ**

ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດແມ່ນໄດ້ ຖືກປ່ຽນເປັນສະກຸນເງິນກີບໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດທີ່ເປັນສະກຸນເງິນຕາຕ່າງປະເທດໃນມື້ລາຍງານແມ່ນໄດ້ແປງຄ່າເປັນສະກຸນເງິນກີບໃນມື້ທີ່ລາຍການເຄື່ອນໄຫວດັ່ງກ່າວເກີດຂຶ້ນ. ສ່ວນແຕກຕ່າງຂອງອັດຕາແລກປ່ຽນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ແມ່ນໄດ້ຖືກຮັບຮູ້ ແລະນຳມາສະເໜີໃນໃບລາຍງານ ຜົນໄດ້ຮັບ.

**2. ພື້ນຖານຂອງການກະກຽມບົດລາຍງານຖານະການເງິນ (ຕໍ່)**

**(ຂ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ(ຕໍ່)**

ອັດຕາແລກປ່ຽນລະຫວ່າງເງິນກີບ ແລະ ເງິນຕາຕ່າງປະເທດມີຄື:

| | ວັນທີ 31 ທັນວາ 2015 ກີບ | ວັນທີ 31 ທັນວາ 2014 ກີບ |
|---|---|---|
| ເງິນໂດລາ | 8,129.00 | 8,067.00 |
| ເງິນບາດ | 226.02 | 246.48 |
| ເງິນຢວນ | 1,225.82 | 1,289.11 |
| ເງິນຢູໂລ | 8,868.00 | 9,787.00 |

**(ຄ) ປີການບັນຊີ**

ປີການບັນຊີຂອງສາຂາແມ່ນເລີ່ມຈາກວັນທີ 1 ມັງກອນ ແລະສິ້ນສຸດໃນວັນທີ 31 ທັນວາ.

**3. ສັງລວມນະໂຍບາຍການບັນຊີທີ່ສຳຄັນ**

ນະໂຍບາຍບັນຊີທີ່ເປັນສາລະສຳຄັນດັ່ງລຸ່ມນີ້ແມ່ນສາຂາໄດ້ນຳໃຊ້ໃນການກະກຽມບົດລາຍງານຖານະການເງິນ.

**(ກ) ເຄື່ອງມືທາງດ້ານການເງິນ**

ເຄື່ອງມືທາງດ້ານການເງິນຂອງສາຂາປະກອບມີ ເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ເງິນກູ້ ແລະ ໜີ້ຕ້ອງຮັບ, ເງິນຝາກ, ການລົງທຶນ, ເງິນລະຫວ່າງທະນາຄານ ແລະ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອື່ນໆ. ນະໂຍບາຍການບັນຊີສຳລັບການຮັບຮູ້ ແລະ ການປະເມີນລາຍການເຫຼົ່ານີ້ແມ່ນໄດ້ຖືກເປີດເຜີຍໄວ້ ໃນບັນດານະໂຍບາຍການບັນຊີຕາມລຳດັບ.

**(ຂ) ເງິນສົດ ແລະ ທຽບເທົ່າເງິນສົດ**

ເງິນສົດ ແລະ ທຽບເທົ່າເງິນສົດປະກອບມີ ເງິນສົດ ແລະ ຍອດຍັງເຫຼືອກັບທະນາຄານອື່ນ, ເງິນຝາກກະແສລາຍວັນ, ແລະ ເງິນລົງທຶນໄລຍະສັ້ນທີ່ມີກຳນົດ 3 ເດືອນ ຫຼື ໜ້ອຍກ່ວາ 3 ເດືອນ, ແລະ ສາມາດ ປ່ຽນເປັນເງິນໄດ້ ແລະ ມີຄວາມສ່ຽງໃນການປ່ຽນຄ່າໜ້ອຍ.

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)**

**(ຄ) ເງິນລົງທຶນ**

ເງິນລົງທຶນປະກອບມີເງິນລົງທຶນຈາກການຊື້ພັນທະບັດ ແລະ ດອກເບ້ຍທີ່ຍັງບໍ່ທັນຮັບຮູ້. ເງິນລົງທຶນໃນການຊື້ພັນທະບັດຂອງ ທຫລ ແມ່ນຖືກບັນທຶກຕາມມູນຄ່າຊື້. ລາຍຮັບດອກເບ້ຍທີ່ຍັງບໍ່ທັນຮັບຮູ້ຈາກການຊື້ຫຼັກຄ້ຳປະກັນແມ່ນສະແດງໃນ "ໜີ້ສິນອື່ນໆ" ແລະ ຮັບຮູ້ລາຍໄດ້ດອກເບ້ຍແບບຄ້າງຮັບ. ເງິນລົງທຶນອື່ນໆແມ່ນຖືເປັນຕົ້ນທຶນ.

**(ງ) ຕາສານສືບເນື່ອງ**

ຕາສານສືບເນື່ອງຜະລິດຕະພັນການເງິນ ແມ່ນໃຊ້ເພື່ອການຈັດການການນຳສະເໜີ ອັດຕາແລກປ່ຽນ, ອັດຕາດອກເບ້ຍເພີ່ມຂຶ້ນຈາກການດຳເນີນງານ, ການເງິນ ແລະ ການລົງທຶນ. ຕາສານສືບເນື່ອງ ຜະລິດຕະພັນການເງິນ ແມ່ນບໍ່ໄດ້ໃຊ້ເພື່ອຈຸດປະສົງການຄ້າ. ເຖິງຢ່າງໃດກໍ່ຕາມ, ຕາສານສືບເນື່ອງ ທີ່ບໍ່ເໝາະສົມກັບການປ້ອງກັນບັນຊີ ແມ່ນຈະຖືກຄຳນວນເປັນເຄື່ອງມືທາງການຄ້າ.

ຕາສານແມ່ນຖືກຮັບຮູ້ເບື້ອງຕົ້ນໃນມູນຄ່າຍຸດຕິທຳ, ລວມທັງການເຄື່ອນໄຫວຕົ້ນທຶນແມ່ນຖືກຮັບຮູ້ເມື່ອມີກຳໄລ ຫຼື ຂາດທຶນເກີດຂຶ້ນ. ພວກເຂົາໄດ້ກຳນົດ ທີ່ມູນຄ່າຍຸດຕິທຳພາຍຫຼັງການຮັບຮູ້ໃນເບື້ອງຕົ້ນ. ກຳໄລ ຫລື ຂາດທຶນໃນການຈັດຄືນໃຫມ່ຕໍ່ກັບມູນຄ່າຍຸດຕິທຳ ແມ່ນຖືກຮັບຮູ້ທັນທີທັນໃດໃນກຳໄລ ຫລື ຂາດທຶນ. ເຖິງຢ່າງໃດກໍ່ຕາມ, ການກຳນົດຕາສານສືບເນື່ອງເພື່ອປ້ອງກັນບັນຊີ, ການຮັບຮູ້ຜົນກຳໄລ ຫລື ຂາດທຶນໃດໆ ແມ່ນຂຶ້ນກັບລັກສະນະຂອງລາຍການທີ່ຖືກປ້ອງກັນ.

ມູນຄ່າຍຸດຕິທຳຂອງການແລກປ່ຽນອັດຕາດອກເບ້ຍ ແມ່ນຈຳນວນທີ່ຖືກປະເມີນໂດຍສາຂາຈະໄດ້ຮັບ ຫລື ຈ່າຍຕໍ່ການຍົກເລີກແລກປ່ຽນໃນວັນທີທີ່ລາຍງານ, ທຳການບັນທຶກເຂົ້າສູ່ບັນຊີອັດຕາດອກເບ້ຍ.

**(ຈ) ເງິນກູ້ ແລະ ເງິນລ່ວງໜ້າ**

ເງິນກູ້ ແລະເງິນລ່ວງໜ້າ ແມ່ນມາຈາກການສະໜອງເງິນຂອງສາຂາໃຫ້ແກ່ລູກຄ້າທີ່ນອກເໜືອຈາກການເກນກຳໄລໃນໄລຍະສັ້ນ. ການນຳສະເໜີ ແມ່ນມາຈາກຍອດຄົງເຫຼືອຫັກລົບເງິນແຮຄ່າເສື່ອມສຳລັບໜີ້ສົງໄສ ແລະ ໜີ້ສູນ ແລະ ເງິນລ່ວງໜ້າ, ເພື່ອສະທ້ອນໃຫ້ເຫັນເຖິງຍອດທີ່ສາມາດຮຽກເກັບຄືນໄດ້. ເງິນກູ້ ແລະ ເງິນລ່ວງໜ້າ, ຍົກເວັ້ນເງິນເບີກເກີນບັນຊີຖືກສະແດງໂດຍບໍ່ລວມດອກເບ້ຍຕ້ອງຮັບ.

**(ສ) ເງິນແຮສຳລັບເງິນກູ້ ແລະ ເງິນລ່ວງໜ້າ ໜີ້ເສຍ ແລະ ໜີ້ຕ້ອງສົງໃສ**

ເພື່ອປະຕິບັດຕາມກົດລະບຽບຂອງທະນາຄານກາງ, ເງິນແຮຕ່ຳສຸດສຳລັບໜີ້ສົງໃສເງິນກູ້ ແລະ ເງິນລ່ວງໜ້າ ແມ່ນໃຫ້ຕັ້ງໄວ້ສຳລັບເງິນກູ້ ແລະ ເງິນລ່ວງໜ້າທີ່ບໍ່ເກີດດອກອອກຜົນ. ນອກຈາກນັ້ນ, ເງິນແຮທົ່ວໄປໃຫ້ຄິດໄລ່ 0.5% ແລະ 3% ຂອງເງິນກູ້ແລະເງິນລ່ວງໜ້າປົກກະຕິ (ເງິນກູ້ເກີດດອກອອກຜົນ) ໄດ້ຖືກຮັບຮອງໂດຍສາຂາຕ້ານກັບຄວາມສ່ຽງແມ່ນບໍ່ສາມາດໄຈ້ແຍກໄດ້ໂດຍສະເພາະ.

| ການຈັດຊັ້ນໜີ້ | ຈຳນວນມື້ເກີນກຳນົດຈ່າຍ | ອັດຕາເງິນແຮ |
|---|---|---|
| ໜີ້ປົກກະຕິ (A) | 0 ຫາ 30 ວັນ ຫຼື ປັດໄຈອື່ນໆ | 0,5% |
| ໜີ້ຄວນເອົາໃຈໃສ່ (B) | 30 ຫາ 89 ວັນ ຫຼື ປັດໄຈອື່ນໆ | 3% |
| ໜີ້ຕ່ຳກວ່າມາດຕະຖານ (C) | 90 ຫາ 179 ວັນ ຫຼື ປັດໄຈອື່ນໆ | 20% |
| ໜີ້ສົງໄສວ່າຈະສູນ (D) | 180 ຫາ 359 ວັນ ຫຼື ປັດໄຈອື່ນໆ | 50% |
| ໜີ້ສູນ (E) | ເລີ່ມແຕ່ 360 ວັນຂຶ້ນໄປ ຫຼື ປັດໄຈອື່ນໆ | 100% |

ອີງຕາມການອະນຸມັດຈາກ ທຫລ ໃນເດືອນ ມີຖຸນາ 2014, ສຳລັບຍອດເຫຼືອຂອງເງິນກູ້ ແລະ ເງິນລ່ວງໜ້າຊັ້ນປົກກະຕິທີ່ຈັດຢູ່ໃນປະເພດຄວາມສ່ຽງຕ່ຳແມ່ນບໍ່ຈຳເປັນຕ້ອງຫັກເງິນແຮເພື່ອຄວາມສ່ຽງອີກຕໍ່ໄປ.

ການຮຽກເກັບຄືນສິນເຊື່ອທີ່ໄດ້ລ້າງອອກຈາກບັນຊີ ແລະ ປີ້ນກັບເງິນແຮແມ່ນໄດ້ເປີດເຜີຍເປັນການຫັກ ອອກຈາກການກະກຽມການຈ່າຍເງິນກູ້ ແລະ ເງິນລ່ວງໜ້າໃນບົດລາຍງານຜົນໄດ້ຮັບ.

**(ຊ) ເງິນຝາກກັບທະນາຄານ**

ເງິນຝາກກັບທະນາຄານອື່ນແມ່ນຖືກບັນທຶກຕາມມູນຄ່າຕົວຈິງ.

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)**

**(ຍ) ຊັບສິນ ແລະ ອຸປະກອນ**

(i) ລາຍການຊັບສິນ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຊື້ລົບໃຫ້ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ (ຖ້າມີ). ຖ້າຫາກລາຍການຊັບສິນມີຫຼາຍຊິ້ນສ່ວນທີ່ມີອາຍຸການໃຊ້ງານຕ່າງກັນແມ່ນໃຫ້ແຍກແຕ່ລະລາຍການຕ່າງຫາກ.

(ii) ຄ່າຫຼຸ້ຍຫ້ຽນຂອງຊັບສິນ ແລະ ອຸປະກອນແມ່ນບັນທຶກໃນໃບລາຍງານຜົນໄດ້ຮັບໂດຍນຳໃຊ້ການຄິດໄລ່ ແບບສະເໝີຕົວຕາມອາຍຸການໃຊ້ງານຂອງຊັບສິນບັດນັ້ນໆດັ່ງລຸ່ມນີ້:

| | |
|---|---|
| ອາຄານ | 5% |
| ການປັບປຸງຈາກການເຊົ່າ | 10 % |
| ອຸປະກອນເຄື່ອງໄຟຟ້າ | 20% |
| ເຄື່ອງໃຊ້, ເຄື່ອງຕິດຕັ້ງ ແລະ ອຸປະກອນອື່ນໆ | 20% |
| ພາຫະນະ | 20% |

ລາຍຈ່າຍທີ່ກ່ຽວຂ້ອງກັບຊັບສິນ ແລະ ອຸປະກອນທີ່ເກີດຂຶ້ນພາຍຫຼັງ ແລະ ເພີ່ມເຂົ້າເປັນຕົ້ນທຶນຊັບສິນໄດ້ ເມື່ອລາຍຈ່າຍເຫຼົ່ານັ້ນເຫັນວ່າຈະເກີດປະໂຫຍດໃນອະນາຄົດ ແລະ ສາມາດເພີ່ມປະສິດທິພາບຂອງຊັບສິນເດີມຂອງສາຂາ. ສ່ວນຄ່າໃຊ້ຈ່າຍອື່ນໆທີ່ຕາມມາແມ່ນໃຫ້ບັນທຶກ ເປັນລາຍຈ່າຍໃນໄລຍະທີ່ເກີດຂຶ້ນ.

(iii) ກຳໄລ ຫຼື ຂາດທຶນທີ່ເກີດຈາກການໝົດອາຍຸ ຫຼື ສະສາງຊັບສິນບັດ ແລະ ອຸປະກອນອອກແມ່ນໃຫ້ບັນທຶກສ່ວນແຕກຕ່າງລະຫວ່າງລາຄາຄາດຄະເນສຸດທິທີ່ສະສາງອອກກັບມູນຄ່າຍັງເຫຼືອ ຂອງຊັບສິນນັ້ນ, ແລະ ສ່ວນແຕກຕ່າງດັ່ງກ່າວແມ່ນໄດ້ບັນທຶກລົງໃນໃບລາຍງານຜົນໄດ້ຮັບ ຕາມວັນທີທີ່ຊັບສິນບັດດັ່ງກ່າວໝົດອາຍຸ ຫຼື ຖືກສະສາງອອກ.

(iv) ຊັບສິນ ແລະ ອຸປະກອນທີ່ມີການຫັກຄ່າຫຼຸ້ຍຫ້ຽນຄົບຕາມກຳນົດແລ້ວແມ່ນໄດ້ນຳສະເໜີຢູ່ໃນໃບສະຫຼຸບຊັບສິນບັດຈົນກ່ວາມີການຊຳລະສະສາງ ແລະ ລ້າງອອກຈາກບັນຊີ.

## 3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)

### (ດ) ຊັບສິນບໍ່ມີຕົວຕົນ

(i) ຊອບແວຣ໌

ຊອບແວຣໂປແກມທີ່ສາຂາໄດ້ຮັບມາແມ່ນບັນທຶກຕາມມູນຄ່າຊື້ລົບໃຫ້ຄ່າເສື່ອມສະສົມ ແລະ ລົບການເສື່ອມມູນຄ່າ,(ຖ້າມີ)

ຄ່າຫຼຸ້ຍຫ້ຽນຂອງຊອບແວຣ໌ຈະບັນທຶກເປັນທຶນ ເມື່ອມັນເກີດຜົນປະໂຫຍດທີ່ມີຕົວຕົນໃຫ້ກັບຊັບສິນອື່ນທີ່ມັນກ່ຽວຂ້ອງໃນອະນາຄົດ. ສ່ວນຄ່າໃຊ້ຈ່າຍອື່ນໆແມ່ນຈະບັນທຶກເປັນລາຍຈ່າຍເມື່ອມັນເກີດຂຶ້ນ.

ຄ່າເສື່ອມແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານການປະເມີນອາຍຸການນຳໃຊ້ຂອງຊອບແວຣ໌, ຈາກມື້ທີ່ມັນສາມາດນຳໃຊ້ໄດ້. ການປະເມີນອາຍຸການນຳໃຊ້ຂອງຊອບແວຣ໌ ແມ່ນ 5 ປີ.

(ii) ສິດນຳໃຊ້ທີ່ດິນ

ສິດນຳໃຊ້ທີ່ດິນປະກອບມີມູນຄ່າທີ່ເກີດຂຶ້ນຈາກການຊື້ສິດນຳໃຊ້ທີ່ດິນຕົວຈິງ ແລະ ຄ່າຕອບແທນຂອງດິນ. ມູນຄ່າເບື້ອງຕົ້ນແມ່ນອີງຕາມມູນຄ່າທີ່ເກີດຂຶ້ນ ແລະ ມູນຄ່າຂອງດິນທີ່ໄດ້ຮັບຮອງຈາກທາງລັດຖະບານໃນເວລາຊື້. ການຫັກຄ່າເສື່ອມແມ່ນຮັບຮູ້ບົນພື້ນຖານການຄາດຄະເນ ຜົນປະໂຫຍດທີ່ເກີດຈາກສິດນຳໃຊ້ທີ່ດິນດັ່ງກ່າວນັ້ນ.

### (ຕ) ເງິນຝາກ

ເງິນຝາກແມ່ນໄດ້ບັນທຶກຕາມມູນຄ່າຕົວຈິງ ແລະ ປັບປຸງຕາມດອກເບ້ຍຄ້າງຈ່າຍ.

### (ຖ) ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍຂອງເງິນຝາກແມ່ນໄດ້ຮັບຮູ້ຕາມຫລັກການຄ້າງຮັບຄ້າງຈ່າຍໃນແຕ່ລະວັນ.

**3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)**

**(ທ) ອາກອນກຳໄລ**

ອາກອນກຳໄລໃນປະຈຸບັນແມ່ນຄິດໄລ່ຕາມກົດຫມາຍອາກອນ ຫຼື ຕາມບັນຍັດໃນວັນທີທີ່ປະກົດໃນໃບລາຍງານຖານະການເງິນ.ຜູ້ບໍລິຫານໄດ້ຄາດຄະເນການບັນທຶກອາກອນກຳໄລຕາມກົດລະບຽບອາກອນ ແລະ ການກຳນົດຈຳນວນເງິນທີ່ຕ້ອງຈ່າຍໃຫ້ຫ້ອງການ ແລະ ເຈົ້າໜ້າທອາກອນີ້.

ອາກອນກຳໄລແມ່ນຄິດໄລ່ຈາກລາຍຮັບທັງໝົດໃນປີ ປະຈຸບັນໂດຍອີງຕາມກົດໝາຍສ່ວຍສາອາກອນ ຂອງ ສປປ ລາວ ສຳລັບກຳໄລໃນແຕ່ລະປີທະນາຄານຈະຕ້ອງຈ່າຍອາກອນກຳໄລໃນອັດຕາ 24% ຂອງກຳໄລທັງໝົດກ່ອນການຄິດໄລ່ອາກອນ.

ອາກອນກຳໄລຂອງທະນາຄານອາດຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນການນຳໃຊ້ກົດລະບຽບ ແລະ ລະບຽບການອາກອນໃນແຕ່ລະກິດຈະກຳທີ່ຖືກຕີຄວາມຫມາຍທີ່ແຕກຕ່າງກັນ,

ຈຳນວນອາກອນກຳໄລທີ່ຖືກລາຍງານໃນບົດລາຍງານຖານະການເງິນອາດຈະມີການປ່ຽນແປງພາຍຫຼັງການພິຈາລະນາຂອງເຈົ້າໜ້າທີ່ສ່ວຍສາອາກອນ.

ລະບົບສ່ວຍສາອາກອນໃນ ສປປ ລາວ ແມ່ນຍັງໃໝ່ ແລະ ສ້າງຕັ້ງຂຶ້ນຈາກອາກອນຫຼາຍຢ່າງ ແລະ ມີການປ່ຽນແປງນິຕິກຳເລື້ອຍໆ, ເຊິ່ງອາດຈະບໍ່ຈະແຈ້ງ, ກົງກັນຂ້າມກັນ, ແລະ ຈະຕ້ອງມີການຕີຄວາມຫມາຍ. ບາງຄັ້ງ, ການຕີຄວາມໝາຍລະຫວ່າງເຈົ້າໜ້າທີ່ອາກອນທີ່ແຕກຕ່າງກັນເກີດຂື້ນເລື້ອຍໆ. ອາກອນແມ່ນຈະຖືກກວດກາ ແລະ ທົບທວນຄືນໂດຍເຈົ້າໜ້າທີ່ສ່ວຍສາອາກອນທີ່ແຕ່ງຕັ້ງຕາມກົດໝາຍ ເພື່ອຄິດໄລ່ການປັບໄໝ, ການລົງໂທດ ແລະ ການຄິດໄລ່ດອກເບ້ຍ.

ເຫດການດັ່ງກ່າວນີ້ອາດກໍ່ໃຫ້ເກີດຄວາມສ່ຽງ ໃນ ສປປ ລາວມີຫລາຍກ່ວາປະເທດອື່ນ. ຜູ້ບໍລິຫານເຊື່ອວ່າທາງສາຂາ ໄດ້ຕັ້ງອາກອນຕ້ອງຈ່າຍພຽງພໍຕາມການຕີຄວາມໝາຍຕາມກົດໝາຍອາກອນ. ເຖິງຢ່າງໃດກໍ່ຕາມ, ເຈົ້າໜ້າທີ່ສວຍສາອາກອນທີ່ກ່ຽວຂ້ອງອາດຕີຄວາມໝາຍທີ່ແຕກຕ່າງ ແລະ ອາດສົ່ງຜົນກະທົບສາລະສຳຄັນຕໍ່ທະນາຄານ.

**(ນ) ເງິນແຮ**

ເງິນແຮ ແມ່ນຖືກຮັບຮູ້, ເປັນຜົນຂອງການດຳເນີນງານທີ່ຜ່ານມາ, ສາຂາມີພັນທະຕາມກົດຫມາຍທີ່ຈະຕັ້ງຂຶ້ນ ແລະ ສາມາດປະເມີນໄດ້ແທ້ຈິງ, ແລະ ອາດຈະເປັນໄປໄດ້ວ່າຜົນໄດ້ຮັບຂອງຜົນປະໂຫຍດຈາກເສດຖະກິດຈະຮຽກຮ້ອງໃຫ້ມີການສ້າງຕັ້ງພັນທະດັ່ງກ່າວ. ເງິນແຮແມ່ນຖືກກຳນົດໂດຍການຫຼຸດຄວາມຄາດຫວັງກະແສເງິນສົດໃນອານາຄົດຂອງອັດຕາອາກ ອນທີ່ສົ່ງຜົນກະທົບຕໍ່ການປະເມີນ ຂອງມູນຄ່າຕະ ຫຼາດ ແລະ ມີຄວາມສ່ຽງຕໍ່ຫນີ້ສິນ.

## 3. ສັງລວມນະໂຍບາຍການບັນຊີທີ່ເປັນສາລະສຳຄັນຕ່າງໆ(ຕໍ່)

### (ປ) ພາກສ່ວນທີ່ກ່ຽວຂ້ອງ

ພາກສ່ວນທີ່ກ່ຽວຂ້ອງ ແມ່ນພາກສ່ວນທີ່ມີຄວາມອາດສາມາດໂດຍທາງກົງ ຫຼື ທາງອ້ອມທີ່ຈະຄວບຄຸມພາກສ່ວນອື່ນ ຫຼື ມີອຳນາດທີ່ພົ້ນເດັ່ນຕໍ່ກັບພາກສ່ວນອື່ນທີ່ກ່ຽວຂ້ອງກັນກັບການຕັດສິນໃຈ ກ່ຽວກັບການເງິນ ແລະ ການດຳເນີນງານ ຫຼື ທະນາຄານພ້ອມກັບພາກສ່ວນດັ່ງກ່າວມີການຄວບຄຸມຮ່ວມກັນ ຫຼື ມີອຳນາດທີ່ພົ້ນເດັ່ນ. ພາກສ່ວນທີ່ກ່ຽວຂ້ອງອາດເປັນບຸກຄົນ ຫຼື ບໍລິສັດ ແລະ ລວມທັງສະມາຊິກຄອບຄົວຂອງບຸກຄົນໃດໜຶ່ງທີ່ຖືວ່າເປັນພາກສ່ວນທີ່ກ່ຽວຂ້ອງ.

## 4. ເງິນສົດ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນກີບ (“ກີບ”) | 14,914,199,502 | 9,248,342,500 |
| ເງິນໂດລາ (“ໂດລາ”) | 52,874,519,599 | 23,332,764,924 |
| ເງິນບາດ (“ໄທບາດ”) | 6,217,254,191 | 7,506,094,876 |
| ເງິນຢວນ (“ຢວນ”) | 6,794,526,580 | 2,228,819,626 |
| | **80,800,499,872** | **42,316,021,926** |

## 5. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | 2015<br>ກີບ | 2014<br>ກີບ |
|---|---:|---:|
| ເງິນກີບ ("ກີບ") | 69,213,908,627 | 19,166,063,414 |
| ເງິນຕາຕ່າງປະເທດອື່ນໆ | 3,193,740,298,349 | 166,029,943,081 |
| | **3,262,954,206,976** | **185,196,006,495** |

### ກ) ທະນາຄານພາຍໃນ

| ຕາມການຮຽກເກັບ | 2015<br>ກີບ | 2014<br>ກີບ |
|---|---:|---:|
| ທະນາຄານແຫ່ງ ສ ປປ ລາວ | 68,076,268,432 | 15,900,705,657 |
| ທະນາຄານທຸລະກິດອື່ນໆ | 1,137,640,195 | 3,265,357,757 |
| | **69,213,908,627** | **19,166,063,414** |

### ຂ) ທະນາຄານຕ່າງປະເທດ

| ຕາມການຮຽກເກັບ | 2015<br>ກີບ | 2014<br>ກີບ |
|---|---:|---:|
| ໂດລາ | 3,057,848,126,492 | 76,290,336,398 |
| ບາດ | 12,235,940,938 | 12,296,680,697 |
| ຢວນ | 123,656,230,919 | 77,442,925,986 |
| | **3,193,740,298,349** | **166,029,943,081** |

## 6. ເງິນຝາກຕາມລະບຽບການກັບທະນາຄານກາງ

| | 2015<br>ກີບ | 2014<br>ກີບ |
|---|---:|---:|
| **ເງິນຝາກຕາມລະບຽບການ:** | | |
| ເງິນທຶນ | 5,000,000 | 7,539,719,883 |
| ເງິນຝາກຂອງລູກຄ້າ | 310,910,885,074 | 145,242,898,297 |
| | **310,915,885,07 4** | **152,782,618,180** |

ເງິນຝາກຕາມລະບຽບການຈາກເງິນລົງທຶນ ແລະ ເງິນຝາກບັງຄັບຈາກເງິນຝາກຂອງລູກຄ້າ ແມ່ນໄດ້ຝາກນຳ ທຫລ ເພື່ອໃຫ້ສອດຄ່ອງກັບຂໍ້ກຳນົດຂອງ ທຫລ.

ເງິນຝາກເຫຼົ່ານີ້ແມ່ນບໍ່ມີດອກເບ້ຍ.

## 7. ເງິນລົງທຶນ

| | 2015<br>ກີບ | 2014<br>ກີບ |
|---|---:|---:|
| ພັນທະບັດລັດຖະບານ | 699,030,000,000 | 1,982,008,000,000 |
| ພັນທະບັດທາງການເງິນ | 1,682,830,820,678 | 25,770,916,691 |
| ດອກເບ້ຍຄ້າງຮັບ | 30,155,485,799 | 28,437,841,294 |
| | **2,412,016,306,477** | **2,036,216,757,985** |

ການລົງທຶນນະທີ່ນີ້ໝາຍເຖິງການລົງທຶນໃນພັນທະບັດທີ່ຄອບຄອງຈົນຮອດກຳນົດ. ພັນທະບັດເຫຼົ່ານີ້ມີໄລຍະຄົບກຳນົດຕັ້ງແຕ່ ວັນທີ 4 ມີນາ 2016 ຫາ 06 ຕຸລາ 2020 (2014: 28 ກຸມພາ 2015 ຫາ 27 ພຶດສະພາ 2019) ແລະ ອັດຕາດອກເບ້ຍຕັ້ງແຕ່ 4.76% ຫາ 6% (2014: 4.33% ຫາ 9%)

## 8. ເງິນກູ້ ແລະ ເງິນລ່ວງໜ້າ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນໃຫ້ກູ້ຢືມ ແລະ ດອກເບ້ຍຕ້ອງຮັບ: | | |
| - ເງິນເບີກເກີນບັນຊີ | 1,461,824,667 | 1,299,767,632 |
| - ເງິນໃຫ້ກູ້ຢືມ | 5,627,408,783,239 | 9,412,231,072,701 |
| | **5,628,870,607,906** | **9,413,530,840,333** |
| ເງິນແຮກັນໜີ້ສົງໄສ ແລະ ໜີ້ສູນ ແລະ ເງິນລ່ວງໜ້າ: | | |
| ທົ່ວໄປ | (6,302,244,056) | (2,150,898,654) |
| | **(6,302,244,056)** | **(2,150,898,654)** |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | **5,622,568,363,850** | **9,411,379,941,679** |

### ກ) ຈັດປະເພດຕາມອາຍຸຂອງສິນເຊື່ອ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ພາຍໃນ 1 ປີ | 5,352,964,387,096 | 8,691,867,907,798 |
| ເກີນ 1 ປີ | 275,906,220,810 | 721,662,932,535 |
| | **5,628,870,607,906** | **9,413,530,840,333** |

### ຂ) ຈັດປະເພດຕາມສະກຸນເງິນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ກີບ | 829,363,874 | 1,055,839,711 |
| ໂດລາ | 4,388,902,440,931 | 9,351,642,902,701 |
| ຢວນ | 1,238,863,241,777 | 60,832,097,921 |
| ບາດ | 275,561,324 | - |
| | **5,628,870,607,906** | **9,413,530,840,333** |

8. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ທະນາຄານອື່ນ ແລະ ລູກຄ້າ (ຕໍ່)

ຄ) ຈັດປະເພດຕາມຂະແໜງເສດຖະກິດ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ອຸດສາຫະກຳ | 174,773,500,000 | 418,596,630,000 |
| ເທັກໂນໂລຊີ | | 322,680,000,000 |
| ບໍລິການ | 24,387,000,000 | 80,670,000,000 |
| ສ່ວນບຸກຄົນ | 1,796,340,811 | 1,441,172,535 |
| ຂະແໜງອື່ນໆ | 5,427,913,767,095 | 8,590,143,037,798 |
| | **5,628,870,607,906** | **9,413,530,840,333** |

ງ) ຈັດປະເພດຕາມຜົນການດຳເນີນງານ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ສິນເຊື່ອເກີດດອກອອກຜົນ | **5,628,870,607,906** | **9,413,530,840,333** |

ຈ) ຈັດປະເພດຕາມອັດຕາດອກເບ້ຍ (ຕໍ່ປີ)

| | 2015<br>% | 2014<br>% |
|---|---|---|
| ເງິນກູ້ | | |
| ໂດລາ | 0.62% - 7.50% | 0.94% - 8.00% |
| ຢວນ | 3.40% - 5.10% | 4.46% |

8. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ທະນາຄານອື່ນ ແລະ ລູກຄ້າ (ຕໍ່)

ສ) ການເຄື່ອນໄຫວເງິນແຮກັບໜີ້ສູນ ແລະ ໜີ້ສົງໄສສຳຫຼັບເງິນກູ້ ແລະ ເງິນລວງໜ້າມີດັ່ງລຸ່ມນີ້:

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຍອດເຫຼືອຕົ້ນປີ | 2,150,898,654 | 31,276,339,691 |
| ສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາ | 4,460,842 | 122,800,622 |
| ເງິນແຮເກັບຄືນໃນປີ | 4,146,884,560 | (29,248,241,659) |
| **ຍອດເຫຼືອທ້າຍປີ** | **6,302,244,056** | **2,150,898,654** |

**9. ຕາສານສືບເນື່ອງຜະລິດຕະພັນທາງການເງິນ**

| | 2015<br>ກີບ | 2014<br>ກີບ |
|---|---|---|
| ແລກປ່ຽນອັດຕາດອກເບ້ຍ | 205,195,795 | 544,632,534 |
| ອັດຕາແລກປ່ຽນເງິນຕາຕ່າງປະເທດອື່ນໆ | 17,467,372,303 | |
| | **17,672,568,098** | **544,632,534** |

## 10. ຊັບສິນ ແລະ ອຸປະກອນ

| | ຊັບສິນ<br>ກີບ | ການປັບປຸງສິ່ງທີ່ໃຫ້ເຊົ່າ<br>ກີບ | ອຸປະກອນ/ເຄື່ອງໄຟຟ້າ<br>ກີບ | ເຟີນີເຈີ, ເຄື່ອງປະກອບ ແລະ ອຸປະກອນ/ຫ້ອງການ<br>ກີບ | ພາຫະນະ<br>ກີບ | ການກໍ່ສ້າງທີ່ກຳລັງດຳເນີນ<br>ກີບ | ລວມ<br>ກີບ |
|---|---|---|---|---|---|---|---|
| **ຕົ້ນທຶນ** | | | | | | | |
| ຍອດເຫລືອໃນວັນທີ 1 ມັງກອນ 2014 | - | **10,361,077,500** | **2,642,247,220** | **387,205,636** | **2,848,597,850** | **1,739,232,154** | **17,978,360,360** |
| ເພີ່ມຂຶ້ນ | | | 631,290,361 | 1,754,735,841 | | 84,901,783,049 | 87,287,809,251 |
| **ຍອດເຫຼືອໃນວັນທີ 31 ທັນວາ 2014 ແລະ 1 ມັງກອນ 2015** | - | **10,361,077,500** | **3,273,537,581** | **2,141,941,477** | **2,848,597,850** | **86,641,015,203** | **105,266,169,611** |
| ເພີ່ມຂຶ້ນ | - | | 777,059,008 | 1,126,957,845 | | 74,293,300,232 | 76,197,317,085 |
| **ການໂອນ** | 152,794,300,966 | | 1,984,961,431 | 6,155,053,038 | | (160,934,315,435) | |
| **ຍອດເຫຼືອໃນວັນທີ 31 ທັນວາ 2015** | **152,794,300,966** | **10,361,077,500** | **6,035,558,020** | **9,423,952,360** | **2,848,597,850** | - | **181,463,486,696** |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | | | |
| ຍອດເຫຼືອໃນວັນທີ 1 ມັງກອນ 2014 | - | **2,169,784,800** | **809,993,913** | **90,381,134** | **1,004,653,463** | | 4,074,813,310 |
| ຄ່າຫຼຸ້ຍຫ້ຽນໃນປີ | | 1,035,256,800 | 536,262,282 | 86,810,128 | 569,407,300 | | 2,227,736,510 |
| **ຍອດເຫຼືອໃນວັນທີ 31 ທັນວາ 2014 ແລະ 1 ມັງກອນ 2015** | - | **3,205,041,600** | **1,346,256,195** | **177,191,262** | **1,574,060,763** | | **6,302,549,820** |
| ຄ່າຫຼຸ້ຍຫ້ຽນໃນປີ | 5,752,010,000 | 1,035,256,800 | 1,050,592,629 | 1,547,947,326 | 569,407,300 | | 9,955,214,055 |

## 10. ຊັບສິນ ແລະ ອຸປະກອນ

| | ຊັບສິນ | ການປັບປຸງສິ່ງທີ່ໃຫ້ເຊົ່າ | ອຸປະກອນ/ ເຄື່ອງໄຟຟ້າ | ເຟີນີເຈີ, ເຄື່ອງປະກອບ ແລະ ອຸປະກອນ/ ຫ້ອງການ | ພາຫະນະ | ການກໍ່ສ້າງທີ່ກຳລັງດຳເນີນ | ລວມ |
|---|---|---|---|---|---|---|---|
| | ກີບ | ກີບ | ກີບ | ກີບ | ກີບ | ກີບ | ກີບ |
| ຍອດເຫຼືອໃນວັນທີ 31 ທັນວາ 2015 | 5,752,010,000 | 4,240,298,400 | 2,396,848,824 | 1,725,138,588 | 2,143,468,063 | | 16,257,763,875 |
| ມູນຄ່າຄົງເຫລືອສຸດທິ | | | | | | | |
| ໃນວັນທີ 1 ມັງກອນ 2014 | - | 8,191,292,700 | 1,832,253,307 | 296,824,502 | 1,843,944,387 | 1,739,232,154 | 13,903,547,050 |
| ໃນວັນທີ 31 ທັນວາ 2014 | - | 7,156,035,900 | 1,927,281,386 | 1,964,750,215 | 1,274,537,087 | 86,641,015,203 | 98,963,619,791 |
| ໃນວັນທີ 31 ທັນວາ 2015 | 147,042,290,966 | 6,120,779,100 | 3,638,709,196 | 7,698,813,772 | 705,129,787 | - | 165,205,722,821 |

## 11. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | ຄອມພິວເຕີ ຊອບແວຣ໌ | ສິດນຳໃຊ້ທີ່ດິນ | ລວມ |
|---|---|---|---|
| | ກີບ | ກີບ | ກີບ |
| **ຕົ້ນທຶນ** | | | |
| ຍອດເຫຼືອໃນວັນທີ 1 ມັງກອນ 2014 | 195,991,044 | 51,863,500,000 | 52,059,491,044 |
| ເພີ່ມຂຶ້ນ | | | |
| **ຍອດເຫລືອໃນວັນທີ 31 ທັນວາ 2014 ແລະ 1 ມັງກອນ 2015** | **195,991,044** | **51,863,500,000** | **52,059,491,044** |
| ໂອນ | 8,611,680 | | 8,611,680 |
| **ຍອດເຫລືອໃນວັນທີ 31 ທັນວາ 2015** | **204,602,724** | **51,863,500,000** | **52,068,102,724** |
| | | | |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | |
| ຍອດເຫຼືອໃນວັນທີ 1 ມັງກອນ 2014 | **29,070,554** | **582,204,141** | **611,274,695** |
| ຫັກຄ່າຫຼຸ້ຍຫ້ຽນໃນປີ | 39,171,800 | 575,892,985 | 615,064,785 |
| **ຍອດເຫຼືອໃນວັນທີ 31 ທັນວາ 2014 ແລະ 1 ມັງກອນ 2015** | **68,242,354** | **1,158,097,126** | **1,226,339,480** |
| ຫັກຄ່າຫຼຸ້ຍຫ້ຽນໃນປີ | 40,468,119 | 575,892,985 | 616,361,104 |
| **ຍອດເຫຼືອໃນວັນທີ 31 ທັນວາ 2015** | **108,710,473** | **1,733,990,111** | **1,842,700,584** |
| | | | |
| **ມູນຄ່າຄົງເຫຼືອ** | | | |
| ໃນວັນທີ 1 ມັງກອນ 2014 | **166,920,490** | **51,281,295,859** | **51,448,216,349** |
| ໃນວັນທີ 31 ທັນວາ 2014 | **127,748,690** | **50,705,402,874** | **50,833,151,564** |
| ໃນວັນທີ 31 ທັນວາ 2015 | **95,892,251** | **50,129,509,889** | **50,225,402,140** |

12. ຊັບສິນອື່ນໆ

| | 2015 ກີບ | 2014 ກີບ |
|---|---|---|
| ດອກເບ້ຍຄ້າງຮັບ | 36,381,975,174 | 17,612,580,839 |
| ລາຍຮັບ ແລະ ລາຍຈ່າຍ ຈ່າຍລ່ວງໜ້າອື່ນໆ | 5,295,908,774 | 6,544,496,606 |
| | **41,677,883,948** | **24,157,077,445** |

13. ເງິນຝາກກັບລູກຄ້າ

ກ) ຈັດປະເພດຕາມປະເພດເງິນຝາກ

| | 2015 ກີບ | 2014 ກີບ |
|---|---|---|
| ເງິນຝາກກະແສລາຍວັນ | 2,043,583,267,855 | 1,853,468,901,060 |
| ເງິນຝາກປະຢັດ | 226,226,405,185 | 170,865,836,972 |
| ເງິນຝາກມີກຳນົດ (ຕາມຈຳນວນມື້ທີ່ຄົບກຳນົດ): | | |
| ພາຍໃນ 1 ປີ | 991,818,008,370 | 28,101,290,516 |
| ຫລາຍກວ່າ 1 ປີ | 27,017,041,973 | 15,380,218,964 |
| | **3,288,644,723,383** | **2,067,816,247,512** |

ຂ) ຈັດປະເພດຕາມສະກຸນເງິນ

| | 2015 ກີບ | 2014 ກີບ |
|---|---|---|
| ລາວກີບ | 106,239,437,136 | 58,810,855,252 |
| ໂດລາ | 3,018,674,628,073 | 1,858,630,446,269 |
| ໄທບາດ | 15,155,448,931 | 16,497,257,504 |
| ຢວນ | 148,575,209,243 | 133,877,688,487 |
| | **3,288,644,723,383** | **2,067,816,247,512** |

**13. ເງິນຝາກກັບລູກຄ້າ (ຕໍ່)**

**ຄ) ອັດຕາດອກເບ້ຍ ( ຕໍ່ປີ)**

| | 2015<br>% | 2014<br>% |
|---|---|---|
| ບັນຊີຝາກປະຢັດ | | |
| ລາວກີບ | 1.00% | 0.50% - 2.00% |
| ໂດລາ | 0.25% - 1.25% | 0.75% - 1.25% |
| ບາດ | 0.25% - 0.50% | 0.25% - 0.50% |
| ຢວນ | 0.50% | 0.20% |
| ບັນຊີຝາກມີກຳນົດ | | |
| ລາວກີບ | 2.5% - 11% | 5% - 11% |
| ໂດລາ | 1.25% - 6.25% | 2.00% - 6.25% |
| ບາດ | 0.75% - 4.5% | 0.75% - 4.50% |
| ຢວນ | 0.3% - 3% | 0.30% - 0.40% |

**14. ເງິນຝາກຈາກທະນາຄານອື່ນ**

| | 2015<br>ກີບ | 2014<br>ກີບ |
|---|---|---|
| ຕາມການຮຽກເກັບ | 171,646,237,322 | 25,710,930,457 |

**ກ) ຈັດປະເພດຕາມທີ່ຢູ່ອາໃສ:**

| | 2015<br>ກີບ | 2014<br>ກີບ |
|---|---|---|
| ພາຍໃນປະເທດ | 171,646,237,322 | 25,710,930,457 |

## 14. ເງິນຝາກຈາກທະນາຄານອື່ນ (ຕໍ່)

### ຂ) ຈັດປະເພດຕາມສະກຸນເງິນ:

| | 2015<br>ກີບ | 2014<br>ກີບ |
|---|---|---|
| ລາວກີບ | 70,047,509,480 | 209,821 |
| ໂດລາ | 35,144,498,087 | 17,509,922,121 |
| ຢວນ | 66,454,229,755 | 8,200,798,515 |
| | **171,646,237,322** | **25,710,930,457** |

## 15. ເງິນຢືມຈາກສະຖາບັນການເງິນອື່ນ ນອກເໜືອຈາກສຳນັກງານໃຫຍ່ ແລະ ສາຂາອື່ນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ທະນາຄານອຸດສາຫະກຳ ແລະ ການຄ້າຈີນ (ເອເຊຍ) ຈຳກັດ | | 484,020,000,000 |
| | | **484,020,000,000** |

## 16. ໜີ້ສິນອາກອນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ອາກອນກຳໄລ | 11,551,520,962 | 4,712,510,182 |
| ອາກອນຫັກນະທີ່ຈ່າຍ ອາກອນລາຍໄດ້ | | 173,289,624 |
| ອາກອນຫັກນະທີ່ຈ່າຍອື່ນໆ | 1,095,813,803 | 48,655,715 |
| | **12,647,334,765** | **4,934,455,521** |

## 17. ຕາສານສືບເນື່ອງຜະລິດຕະພັນທາງການເງິນ

| | 2015<br>ກີບ | 2014<br>ກີບ |
|---|---|---|
| FX ສັນຍາມາດຕະຖານພາຍໃນ ອັດຕາແລກປ່ຽນເງິນຍວນ | 202,386,412 | - |
| IR ສັນຍາມາດຕະຖານພາຍນອກ | 22,591,629 | - |
| | **224,978,041** | - |

## 18. ໜີ້ສິນອື່ນໆ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ດອກເບ້ຍຄ້າງຈ່າຍ | 41,539,808,669 | 22,669,908,359 |
| ລາຍຈ່າຍທີ່ຕ້ອງຈ່າຍໃຫ້ບຸກຄະລາກອນ | 1,624,902,000 | 5,786,515,000 |
| ບັນຊີຊໍາລະສະສາງ | 7,651,253,087 | 32,866,502,175 |
| ລາຍຮັບເຍື້ອນຊໍາລະ | 131,187,280 | 567,432,780 |
| ລາຍຈ່າຍອື່ນໆ | 7,526,630,550 | 258,487,402 |
| | **58,473,781,586** | **62,148,845,716** |

## 19. ທຶນປະກອບຈົດທະບຽນຈາກສໍານັກງານໃຫ່ຍ

| | 2014<br>ກີບ | 2013<br>ກີບ |
|---|---|---|
| **ລວມເງິນທຶນທີ່ປະກອບສ່ວນຕາມກົດໝາຍ** | **239,970,000,000** | **239,970,000,000** |

## 20. ຄັງແຮ່ສຳຮອງຕາມລະບຽບການ

ຄັງແຮສຳຮອງຕາມລະບຽບການຕ້ອງໄດ້ຮັກສາໄວ້ໃນອັດຕາ 10% ຂອງກຳໄລໃນປີ ເພື່ອປະຕິບັດຕາມຂໍ້ກຳນົດຂອງ ທະນາຄານແຫ່ງ ສ ປ ປ ລາວ.

## 21. ລາຍຈ່າຍດອກເບ້ຍ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນຝາກ | 18,961,830,169 | 3,080,495,004 |
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | 145,745,072,260 | 69,473,752,857 |
| ເງິນກູ້ຢືມຈາກສະຖາບັນການເງິນອື່ນ ນອກເໜືອຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | 2,767,326,907 | 42,279,245,862 |
| | **167,474,229,336** | **114,833,493,723** |

## 22. ລາຍຮັບອື່ນໆ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ | | |
| ຄ່າທຳນຽມທະນາຄານ | 739,557,064 | 448,560,529 |
| ຄ່າທຳນຽມອອກໜັງສືຄ້ຳປະກັນ | 25,331,635 | 13,594,105 |
| ຄ່າທຳນຽມອອກໜັງສືສິນເຊື່ອ | 17,786,709 | 45,431,376 |
| ຄ່າທຳນຽມໂອນເງິນ | 1,634,489,203 | 1,625,730,388 |
| ຄ່າທຳນຽມອີແບັງຄິງ | 57,908,856 | 90,214,937 |
| ຄ່າທຳນຽມໃນການໃຫ້ບໍລິການທາງການເງິນ | 5,179,717,301 | 3,530,888,885 |
| ຄ່າທຳນຽມອື່ນໆ | (1,507,057,797) | (539,654,077) |
| ລວມລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ | 6,147,732,971 | 5,214,766,143 |
| ກຳໄລຈາກການແລກປ່ຽນ | 74,056,302,276 | 2,861,033,003 |
| ລາຍຮັບອື່ນໆ | 801,931,216 | 6,362,224 |
| | **81,005,966,463** | **8,082,161,370** |

## 23. ອາກອນກຳໄລ

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ການຈ່າຍອາກອນ** | **19,937,014,101** | **26,860,076,810** |

ລາຍຈ່າຍອາກອນກຳໄລ ທີ່ໄດ້ຖືກຄຳນວນແມ່ນໃນອັດຕາ 24% ຂອງກຳໄລທີ່ຕ້ອງເສຍອາກອນລາຍຈ່າຍອາກອນກຳໄລທີ່ໄດ້ຖືກຄຳນວນ ແມ່ນຈະຖືກກວດກາ ແລະ ອະນຸມັດໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

## 24. ເງິນສົດ ແລະ ທຽບເທົ່າເງິນສົດ

| | 2015<br>ກີບ | 2014<br>ກີບ |
|---|---|---|
| ເງິນສົດ | 80,800,499,872 | 42,316,021,926 |
| ເງິນຝາກ ແລະ ເງິນກູ້ໃຫ້ສຳນັກງານໃຫຍ່ ແລະ ສາຂາອື່ນ | 3,081,427,165,032 | 823,021,729,795 |
| ເງິນຝາກ ແລະ ເງິນກູ້ໃຫ້ທະນາຄານອື່ນ | 3,262,954,206,976 | 185,196,006,495 |
| | **6,425,181,871,880** | **1,050,533,758,216** |

## 25. ການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ສ່ວນໜຶ່ງຂອງຊັບສິນ, ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ຂອງທະນາຄານແມ່ນເກີດຈາກການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ. ພາກສ່ວນເຫຼົ່ານີ້ ມີສາຍພົວພັນມາຈາກຜູ້ຖືຮຸ້ນສາມັນ ແລະ/(ຫຼື) ຜູ້ບໍລິຫານ. ບົດລາຍງານການເງິນສະທ້ອນໃຫ້ເຫັນຜົນກະທົບຕໍ່ກັບການເຄື່ອນໄຫວເຫຼົ່ານີ້, ເຊິ່ງຜ່ານການເຈລະຈາ ຕາມສັນຍາ.

| | 2015<br>ກີບ | 2014<br>ກີບ |
|---|---|---|

| | | |
|---|---|---|
| ທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດເງິນ | | |
| ເງິນຝາກຢູ່ສຳນັກງານໃຫຍ່ | 1,870,921,994,086 | 727,682,755,723 |
| ເງິນກູ້ໃຫ້ສາຂາອື່ນ | 1,210,505,170,946 | 95,338,974,072 |
| ລວມຍອດ | 3,081,427,165,032 | 823,021,729,795 |
| ດອກເບ້ຍຄ້າງຮັບ | 9,046,333,323 | 88,422,306 |
| **ລວມ** | **3,090,473,498,355** | **823,110,152,101** |

25. ການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

(ກ) ສຳນັກງານໃຫຍ່ ສາຂາອື່ນໆຂອງນິຕິບຸກຄົນດຽວກັນ

( i.) ການເຄື່ອນໄຫວຕ່າງປະເທດ

| | **2015**<br>**ກີບ** | **2014**<br>**ກີບ** |
|---|---|---|
| ໂດລາສະຫະລັດ | 2,498,067,909,359 | 776,626,960,032 |
| ຢວນ | 591,717,080,669 | 46,452,275,425 |
| ຢູໂຣ | 688,508,327 | 30,916,644 |
| | **3,090,473,498,355** | **823,110,152,101** |

25. ການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

(ກ) ສຳນັກງານໃຫຍ່ ສາຂາອື່ນໆຂອງນິຕິບຸກຄົນດຽວກັນ (ຕໍ່)

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ຍອດເຫຼືອທ້າຍຂອງປີ:** | | |
| ເງິນຝາກຈາກສາຂາອື່ນໆ | (1,346,635,638,749) | (1,332,595,257,721) |
| ເງິນກູ້ຢືມຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | (9,804,422,275,043) | (8,482,536,170,000) |
| ລວມຍອດ | (11,151,057,913,792) | (9,815,131,427,721) |
| ດອກເບ້ຍຄ້າງຈ່າຍ | (26,433,382,795) | (13,191,407,073) |
| **ລວມ** | **(11,177,491,296,587)** | **(9,828,322,834,794)** |
| **ການເຄື່ອນໄຫວໃນປີ:** | | |
| ລາຍຮັບດອກເບ້ຍທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດການເງິນ | 17,166,251,654 | 4,441,958,299 |
| ລາຍຈ່າຍດອກເບ້ຍຈາກທຸລະກຳລະຫວ່າງທະນາຄານ ແລະ ຕະຫຼາດການເງິນ | (145,745,072,260) | (69,473,752,857) |

**(ຂ) ພາກສ່ວນທີ່ກ່ຽວຂ້ອງອື່ນໆ.**

| | 2015<br>ກີບ | 2014<br>ກີບ |
|---|---|---|
| **ຍອດເຫລືອທ້າຍຂອງປີ:** | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | 3,019,127,085,197 | 81,359,934,582 |
| ເງິນກູ້ຢືມຈາກສະຖາບັນການເງິນອື່ນ ນອກເໜືອຈາກສຳນັກງານໃຫຍ່ ແລະ ສາຂາອື່ນ | | (484,020,000,000) |
| **ການເຄື່ອນໄຫວໃນປີ:** | | |
| ລາຍຮັບດອກເບ້ຍຕາມຈຳນວນທີ່ຕ້ອງຮັບຈາກ ທະນາຄານ | 7,412,695,624 | 227,582,496 |
| ລາຍຈ່າຍດອກເບ້ຍເງິນກູ້ຢືມຈາກສະຖາບັນ ການເງິນອື່ນ ນອກເໜືອຈາກສຳນັກງານ ໃຫຍ່ ແລະ ສາຂາອື່ນ | (2,767,326,907) | (42,279,245,862) |

## 26. ພາລະຜູກພັນ

ໃນພາກປະຕິບັດຂອງການດຳເນີນທຸລະກິດ, ທາງສາຂາໄດ້ມີພັນທະ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນທີ່ແນ່ນອນທາງດ້ານກົດໝາຍໃຫ້ກັບລູກຄ້າຂອງຕົນ. ຄາດວ່າຈະບໍ່ມີການສູນເສຍຈາກທຸລະກຳເຫຼົ່ານີ້ ເຊິ່ງປະກອບດ້ວຍ:

| | 2015<br>ກີບ | 2014<br>ກີບ |
|---|---|---|
| ໜັງສືຄ້ຳປະກັນສິນເຊື່ອຄ້າງຊຳລະ | - | 339,854,643 |
| | **-** | **339,854,643** |